ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ສະພາແຫ່ງຊາດ

ຄະນະປະຈຳ

ເລກທີ 0137 /ຄປຈ

ນະຄອນຫຼວງວຽງຈັນ, ວັນທີ 04 / 11 / 15

# ມະຕິ

## ຂອງຄະນະປະຈຳສະພາແຫ່ງຊາດ

## ວ່າດ້ວຍການທົດລອງນຳໃຊ້ອັດຕາອາກອນຊົມໃຊ້ຍານພາຫະນະ

- ອີງຕາມມາດຕາ 53 ຂໍ້ 3 ຂອງລັດຖະທຳມະນູນແຫ່ງ ສປປ ລາວ ສະບັບປັບປຸງປີ 2003 ກ່ຽວກັບສິດ ແລະ ໜ້າທີ່ ຂອງ ສະພາແຫ່ງຊາດ ໃນການພິຈາລະນາຮັບຮອງເອົາການກຳນົດ, ການປ່ຽນແປງ ຫຼື ລົບລ້າງພາສີ ແລະ ສ່ວຍສາອາກອນ;
- ອີງຕາມ ມາດຕາ 26 ຂອງ ກົດໝາຍວ່າດ້ວຍສະພາແຫ່ງຊາດ ສະບັບເລກທີ 04/ສພຊ, ລົງວັນທີ 15 ທັນວາ 2010;
- ອີງຕາມ ມາດຕາ 97 ຂອງກົດໝາຍວ່າດ້ວຍສ່ວຍສາອາກອນສະບັບ ເລກທີ 05/ສພຊ, ລົງວັນທີ 20 ທັນວາ 2011;
- ອີງຕາມໜັງສືສະເໜີ ຂອງ ທ່ານ ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ສະບັບ ເລກທີ 19/ນຍ, ລົງວັນທີ 10/03/2015.
- ອີງຕາມບົດລາຍງານຂອງກະຊວງການເງິນ ສະບັບເລກທີ 2931/ກງ, ລົງວັນທີ 2 ກັນຍາ 2015;
- ອີງຕາມການຕົກລົງຂອງກອງປະຊຸມຄະນະປະຈຳສະພາແຫ່ງຊາດ ປະຈຳເດືອນ ຕຸລາ 2013.

ຜ່ານການຄົ້ນຄວ້າ, ພິຈາລະນາ ຮ່າງລັດຖະບັນຍັດວ່າດ້ວຍອາກອນຊົມໃຊ້ຍານພາຫະນະ ທີ່ ກະຊວງການເງິນ ຕາງໜ້າ ລັດຖະບານ ໄດ້ສະເໜີ ຕໍ່ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ຄັ້ງວັນທີ 27 ເດືອນ ຕຸລາ 2015

### ຄະນະປະຈຳສະພາແຫ່ງຊາດ ຕົກລົງ:

ມາດຕາ 1 ເຫັນດີ ໃຫ້ລັດຖະບານດຳເນີນການ ເຮັດທົດລອງນຳໃຊ້ອັດຕາອາກອນຊົມໃຊ້ຍານພາຫະນະນຳເຂົ້າ ດ້ວຍລາຄາຕົວຈິງ ເປັນເວລາ 3 ເດືອນ ນັບແຕ່ ວັນທີ 1 ເດືອນ ພະຈິກ 2015 ຈົນຮອດ ວັນທີ 31 ເດືອນ ມັງກອນ 2016 ແລະ ໃຫ້ຄົ້ນຄວ້າ ປັບປຸງກົດໝາຍວ່າດ້ວຍສ່ວຍສາອາກອນ ແລ້ວນຳສະເໜີ ຕໍ່ ກອງປະຊຸມສະໄໝສາມັນສະພາແຫ່ງຊາດເທື່ອທີ 10 ເພື່ອ ພິຈາລະນາ.

ມາດຕາ 2 ເຫັນດີ ຮັບຮອງເອົາ ອັດຕາອາກອນຊົມໃຊ້ຍານພາຫະນະນຳເຂົ້າ ເພື່ອເຮັດທົດລອງ ຕາມທີ່ລັດຖະບານສະເໜີມາ ລະອຽດ ຄື:

| ລ/ດ | ປະເພດຍານພາຫະນະ | ຄວາມແຮງ(ຊຊເຊ) | ອັດຕາເປັນສ່ວນຮ້ອຍ(%) |
|---|---|---|---|
| 1 | ລົດຈັກ | | |
| 1.1 | ລົດຈັກທີ່ນຳໃຊ້ພະລັງງານເຊື້ອໄຟ | ແຕ່ 110 ຊຊເຊ ລົງມາ<br>ແຕ່ 111-150 ຊຊເຊ<br>ແຕ່ 151-250 ຊຊເຊ<br>ແຕ່ 251-500 ຊຊເຊ<br>ແຕ່ 501-1.000ຊຊເຊ | 20%<br>30%<br>40%<br>60%<br>80% |
| 1.2 | ລົດຈັກທີ່ນຳໃຊ້ພະລັງງານສະອາດ | | 5% |
| 1.3 | ສິ້ນສ່ວນປະກອບ ແລະ ເຄື່ອງອາໄຫຼ່ ປ່ຽນຖ່າຍລົດຈັກ | | 5% |
| 2 | ລົດຂົນສົ່ງ | | |
| 2.1 | ລົດຂົນສົ່ງຂະໜາດນ້ອຍ:<br>- ທີ່ນຳໃຊ້ພະລັງງານເຊື້ອໄຟ:<br>ລົດເກງ,ລົດຈີບ,ລົດຕູ້,ລົດກະບະ | ແຕ່ 1.000 ຊຊເຊ ລົງມາ<br>ແຕ່ 1.001-1.600 ຊຊເຊ<br>ແຕ່ 1.601-2.000ຊຊເຊ<br>ແຕ່ 2.001-2.500ຊຊເຊ<br>ແຕ່2.501-3.000ຊຊເຊ<br>ແຕ່3.001-4.000ຊຊເຊ<br>ແຕ່4.001-5.000ຊຊເຊ<br>ແຕ່ 5.001 ຊຊເຊ ຂຶ້ນໄປ | 25%<br>30%<br>35%<br>40%<br>45%<br>70%<br>80%<br>90% |
| 2.2 | ລົດຂົນສົ່ງຂະໜາດນ້ອຍ:<br>- ທີ່ນຳໃຊ້ພະລັງງານສະອາດ:<br>ລົດເກງ,ລົດຈີບ,ລົດຕູ້,ລົດກະບະ | | 10% |
| 2.3 | ລົດຂົນສົ່ງຂະໜາດນ້ອຍ ( ລົດກະບະ) ທີ່ລວງຍາວກະບະ ຍາວກວ່າ 50% ຂອງ ຄວາມຍາວ ແຕ່ໃຈກາງ ລໍ້ໜ້າ ຫາ ລໍ້ຫຼັງ<br>+ ທີ່ນຳໃຊ້ພະລັງງານເຊື້ອໄຟ<br>+ ທີ່ນຳໃຊ້ພະລັງງານສະອາດ<br>ລົດຂົນສົ່ງຂະໜາດກາງ<br>+ ທີ່ນຳໃຊ້ພະລັງງານເຊື້ອໄຟ<br>+ ທີ່ນຳໃຊ້ພະລັງງານສະອາດ<br>ລົດຂົນສົ່ງຂະໜາດໃຫຍ່:<br>+ ທີ່ນຳໃຊ້ພະລັງງານເຊື້ອໄຟ<br>+ ທີ່ນຳໃຊ້ພະລັງງານສະອາດ | | -<br>8%<br>5%<br>-<br>8%<br>5%<br>-<br>5%<br>3% |
| 3 | ສິ້ນສ່ວນປະກອບ ແລະ ເຄື່ອງ ອາໄຫຼ່ ປ່ຽນຖ່າຍຂອງລົດຂົນສົ່ງທຸກຂະໜາດ | | 5% |

ມາດຕາ 3 ຍານພາຫະນະ ທີ່ຖືກຍົກເວັ້ນອາກອນຊົມໃຊ້ປະກອບມີ:

1. ລົດຖີບ;
2. ລົດໄຟ;
3. ເຮືອບິນ (ຍົນ);

4. ລົດກູ້ໄພຈະລາຈອນ;
5. ລົດດັບເພີງ;
6. ລົດຮັບໃຊ້ສາທາລະນະເຊັ່ນ: ລົດຂົນສິ່ງຂີ້ເຫຍື່ອ, ລົດດູດຝຸ່ນ, ລົດອະນາໄມຕົວເມືອງທີ່ອອກແບບມາໂດຍສະເພາະ;
7. ລົດຮັບໃຊ້ກະສິກຳເຊັ່ນ: ລົດໄຖ, ລົດຄາດ, ລົດປັກດຳ, ລົດກ່ຽວ, ລົດຫວ່ານ, ລົດຢອດເມັດຫຼືຢອດລຳແລະອື່ນໆທີ່ຄ້າຍຄຽງ ( ບໍ່ລວມລົດຂົນສົ່ງຜົນຜະລິດກະສິກຳ);
8. ລົດກົນຈັກໜັກສະເພາະ ທີ່ນຳໃຊ້ສະເພາະໃນຂະແໜງການໃດໜຶ່ງ ເຊັ່ນ: ການຂຸດຄົ້ນບໍ່ແຮ່, ການປູພື້ນ-ປູຢາງ, ການຜະລິດເບຕົງ, ການຜະລິດກະສິກຳແລະອຸດສາຫະກຳປຸງແຕ່ງ, ການບໍລິການສາທາລະນະ (ວຽກງານໂຍທາ) ແລະ ອຸດສາຫະກຳການຂົນສົ່ງສະເພາະເປັນຕົ້ນແມ່ນ: ປະເພດຫົວລາກ-ຫາງລາກ, ລົດດ້າມ, ລົດນ້ຳ, ລົດຕູ້ແຊ່ເຢັນ ແລະ ລົດຂົນສົ່ງວັດຖຸອັນຕະລາຍ (ລົດບັນທຸກນ້ຳມັນ,ລົດອາຍແກັສ, ລົດຂົນສົ່ງສານເຄມີ) ແລະ ອື່ນໆທີ່ຄ້າຍຄຽງ;
9. ລົດກົນຈັກໜັກທົ່ວໄປເຊັ່ນ: ລົດຕັກ, ລົດຈົກ-ຕັກ, ລົດກວາດ, ລົດດຸດ, ລົດເຄຣນ, ລົດໂລ, ລົດຍົກຍໍ( ຟອກລິບ);
10. ຍານພາຫະນະ ທີ່ນຳເຂົ້າເພື່ອສົ່ງອອກ ແລະ ຍານພາຫະນະທີ່ຜະລິດ ຫລື ປະກອບຢູ່ພາຍໃນປະເທດ ທີ່ສົ່ງອອກໄປຈຳໜ່າຍຢູ່ຕ່າງປະເທດ;
11. ຍານພາຫະນະ ທີ່ຈຳໜ່າຍໃຫ້ແກ່ອົງການຈັດຕັ້ງທາງການທູດຂອງຕ່າງປະເທດ ແລະ ອົງການຈັດຕັ້ງສາກົນຢູ່ ສປປ ລາວ ຕາມລະບຽບການ ຂອງ ກະຊວງການຕ່າງປະເທດ ກຳນົດອອກ.

- ສຳລັບຜູ່ຜະລິດ ຫຼື ປະກອບ ຍານພາຫະນະ ຢູ່ ສປປ ລາວທີ່ໄດ້ມອບອາກອນຊົມໃຊ້ ໃນເວລານຳເຂົ້າສິ້ນສ່ວນປະກອບ ແລະ ອາໄຫລ່ ຢູ່ດ່ານບ່ອນນຳເຂົ້າແລ້ວ ແມ່ນບໍ່ໄດ້ມອບອາກອນຊົມໃຊ້ຢູ່ພາຍໃນຕື່ມອີກ.

ມາດຕາ 4 ມະຕິ ສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ຄະນະປະຈຳສະພາແຫ່ງຊາດ ແຫ່ງ ສປປ ລາວ

ປະທານ

ປານີ ຢາທໍ່ຕູ້